DSHS
WASHINGTON STATE Department of Social and Health Services

ຄຳຮ້ອງຂໍໃຫ້ມີການພິຈາລະນາຄະດີຕໍ່

(DSHS Administrative Hearing Request)

I. ຕ້ອງປະກອບຟອມໃສ່ໂດຍຜູ້ຮ້ອງຂໍ (ບຸກຄົນທີ່ຮ້ອງຂໍເອົາການພິຈາລະນາຄະດີ)

ຂໍ້ມູນເບື້ອງຕົ້ນ

1. ຊື່ຕາມກົດໝາຍ	2. ເບີໂທຣະສັບ (ຫຼັກ) ແລະລະຫັດພື້ນທີ່)	3. ເບີໂທຣະສັບສຳຮອງ (ຖ້າມີ)
4. ທີ່ຢູ່ປັດຈຸບັນ		
5. ຂ້າພະເຈົ້າກ່າວັງຮ້ອງຂໍໃຫ້ມີການພິຈາລະນາຄະດີເພື່ອຄັດຄ້ານຄຳຕັດສິນຂັ້ນຕົ້ນທີ່ມີພະຍານຫຼັກຖານຢັ້ງຢືນຂອງໂຄງການ (ທ່ານສາມາດປ່ຽນສິ່ງນີ້ໄດ້ໃນພາຍຫຼັງ):		
6. ທ່ານຕ້ອງການການຊ່ວຍເຫຼືອໃນຂັ້ນຕອນການປາກົດຕົວທີ່ສານ, ເຊັ່ນ ການມີນາຍພາສາ ຫຼື ການອ່ານວຍຄວາມສະດວກສຳລັບຜູ້ພິການ ບໍ?		

ຂໍ້ມູນຂອງຕົວແທນ

7. ຈະມີໃຜຜູ້ໜຶ່ງເປັນຕົວແທນທ່ານຢູ່ທີ່ສານແມ່ນບໍ່? ☐ ແມ່ນ ☐ ບໍ່ແມ່ນ	8. ຕົວແທນນີ້ແມ່ນທະນາຍຄວາມບໍ່? ☐ ແມ່ນ ☐ ບໍ່ແມ່ນ	
9. ຊື່ຂອງຕົວແທນ	10. ອົງການຂອງຕົວແທນ	11. ເບີໂທຣະສັບຂອງຕົວແທນ
12. ທີ່ຢູ່ຂອງຕົວແທນ		

ລາຍເຊັ່ນ

13. ລາຍເຊັ່ນ	14. ວັນທີ

II. ຕ້ອງປະກອບຂໍ້ມູນໃສ່ໂດຍ DSHS

ຂໍ້ມູນຂອງຫ້ອງການດູແລດ້ານການພິຈາລະນາຄະດີ (Office of Administrative Hearings, OAH)

	ລະຫັດການສືບສວນຂອງ DSHS
	ເບີໂທຣະສັບຂອງ OAH (ແລະລະຫັດພື້ນທີ່)
	ເບີໂທຣະສັບຟຣີຂອງ OAH
	ເບີແຟກຊ໌ຂອງ OAH (ແລະລະຫັດພື້ນທີ່)

ຄຳຮ້ອງຂໍໃຫ້ມີການພິຈາລະນາຄະດີຕໍ່ DSHS

ຄຳແນະນຳ DSHS 27-178

ທ່ານມີສິດທີ່ຈະຮ້ອງຂໍເອົາການພິຈາລະນາຄະດີເພື່ອຄັດຄ້ານຄຳຕັດສິນຂັ້ນຕົ້ນທີ່ມີພະຍານຫຼັກຖານຢັ້ງຢືນທີ່ເຮັດໂດຍ DSHS ຕາມກົດລະບຽບດ້ານການບໍລິຫານຂອງລັຖ Washington (Washington Administrative Code, WAC) 388-71-0090. ເພື່ອຮ້ອງຂໍເອົາການພິຈາລະນາຄະດີ, ທ່ານຕ້ອງສົ່ງຂໍ້ມູນທີ່ກຳນົດເບື້ອງຕົ້ນໃນຟອມ (WAC 388-71-0100) ໂດຍສົ່ງໄປທີ່ຫ້ອງການດູແລດ້ານການພິຈາລະນາຄະດີ (OAH):

- ຊື່ເຕັມຕາມກົດໝາຍ, ທີ່ຢູ່ປັດຈຸບັນ ແລະເບີໂທຣະສັບຂອງຜູ້ກະທຳຜິດທີ່ຖືກກ່າວຫາ;
- ຄຳອະທິບາຍຫຍໍ້ໆ ວ່າເປັນຫຍັງຜູ້ກະທຳຜິດທີ່ຖືກກ່າວຫານັ້ນຈຶ່ງບໍ່ເຫັນດີນຳຜົນການຕັດສິນເບື້ອງຕົ້ນທີ່ມີພະຍານຫຼັກຖານຢັ້ງຢືນນັ້ນ; ແລະ
- ລາຍລະອຽດຂອງການຊ່ວຍເຫຼືອໃດໆ ທີ່ຈຳເປັນໃນຂັ້ນຕອນການອຸທອນຈາກຜູ້ກະທຳຜິດທີ່ຖືກກ່າວຫາ, ລວມເຖິງ ນາຍພາສາ ຫຼື ການອ່ານວຍຄວາມສະດວກໃດໜຶ່ງສຳລັບຜູ້ພິການ.

OAH ຕ້ອງໄດ້ຮັບຂໍ້ມູນນີ້ພາຍໃນວັນທີໃດໜຶ່ງທີ່ມາກ່ອນໃນສອງວັນທີຫຼ່ານີ້ (WAC 388-71-0100):

- ບໍ່ເກີນເວລາ 5.00 ໂມງແລງຂອງວັນທີສາມສິບ (30) ຕາມວັນໃນປະຕິທິນ ນັບຕັ້ງແຕ່ວັນທີສົ່ງໄປສະນີທີ່ຢູ່ໃນຈົດໝາຍແຈ້ງການຂອງທາງກະຊວງ; ຫຼື
- ບໍ່ເກີນເວລາ 5.00 ໂມງແລງ ຂອງວັນທີສາມສິບ (30) ວັນຕາມວັນໃນປະຕິທິນ ນັບຕັ້ງແຕ່ວັນທີທີ່ເຈົ້າໜ້າທີ່ໄດ້ນຳສົ່ງຈົດໝາຍແຈ້ງການຂອງທາງກະຊວງໃຫ້ແກ່ຜູ້ກະທຳຜິດທີ່ຖືກກ່າວຫາ.

ເພື່ອຮ້ອງຂໍເອົາການພິຈາລະນາຄະດີ, ທ່ານຕ້ອງປະກອບຟອມນີ້ ຫຼື ສົ່ງໜັງສືຄຳຮ້ອງພ້ອມດ້ວຍຂໍ້ມູນທີ່ຈຳເປັນເບື້ອງຕົ້ນ ກ່ອນຮອດວັນທີທີ່ບົ່ງໄວ້ຂ້າງເທິງ ໂດຍສົ່ງໄປທີ່ຫ້ອງການ OAH ຕາມທີ່ບົ່ງໄວ້ໃນຟອມນີ້.

<u>ຄຳແນະນຳໃນການປະກອບຟອມ</u>:

- ພາກສ່ວນທີ I – **ຈຳເປັນຕ້ອງມີ**
  - ຂໍ້ທີ (1) ຫາ (4) – ໃຫ້ຂໍ້ມູນທີ່ຮ້ອງຂໍ.
  - ຂໍ້ທີ (5) – ອະທິບາຍວ່າເປັນຫຍັງທ່ານຈຶ່ງບໍ່ເຫັນດີນຳການຕັດສິນຂັ້ນຕົ້ນ. ທ່ານສາມາດປ່ຽນສິ່ງນີ້ໄດ້ໃນພາຍຫຼັງ.
  - ຂໍ້ທີ (6) – ຮ້ອງຂໍເອົາການຊ່ວຍເຫຼືອໃດໆ ໃນຂັ້ນຕອນການພິຈາລະນາຄະດີ. ກະຣຸນາບອກດ້ວຍວ່າ ທ່ານຕ້ອງການນາຍພາສາຫຼືບໍ່. ການຊ່ວຍເຫຼືອແມ່ນບໍ່ລວມເຖິງການເປັນຕົວແທນ (ເຊັ່ນ ການຫາທະນາຍຄວາມໃຫ້ແກ່ທ່ານ).
- ພາກສ່ວນທີ I – ມີຫຼືບໍ່ມີກໍ່ໄດ້
  - ຂໍ້ (7) ແລະ (8) – ທ່ານຈະມີຕົວແທນຂອງທ່ານບໍ? ທ່ານສາມາດປ່ຽນແປງສິ່ງນີ້ໄດ້ໃນພາຍຫຼັງ.
  - ຂໍ້ (9) ຫາ (12) – ໃຫ້ຂໍ້ມູນນີ້ສະເພາະຖ້າວ່າທ່ານມີຕົວແທນ.

  ຂໍ້ທີ 13 ແລະ 14 ແມ່ນຈຳເປັນຕ້ອງມີ.
- ພາກສ່ວນທີ II – **ຈຳເປັນຕ້ອງມີ**
  - DSHS ຈະໃຫ້ຂໍ້ມູນທີ່ກ່ຽວພັນກັບຜົນການຕັດສິນທີ່ຕ້ານຕໍ່ທ່ານ ແລະໃຫ້ຂໍ້ມູນຕິດຕໍ່ຂອງຫ້ອງການ OAH.

<u>ຈະສົ່ງຟອມນີ້ ຫຼື ໜັງສືຄຳຮ້ອງຂໍໃຫ້ມີການພິຈາລະນາຄະດີໄປບ່ອນໃດ</u>:

- DSHS ຈະໃຫ້ສຳເນົາຂອງຟອມນີ້ພ້ອມກັບຈົດໝາຍແຈ້ງຄຳຕັດສິນຂັ້ນຕົ້ນທີ່ມີພະຍານຫຼັກຖານຢັ້ງຢືນ. DSHS ຈະໃຫ້ຂໍ້ມູນແກ່ທ່ານກ່ຽວກັບ ທີ່ຢູ່, ເບີໂທຣະສັບ, ແລະເບີແຟກຊ໌ຂອງຫ້ອງການ OAH ໃນເຂດພື້ນທີ່ຂອງທ່ານ.
- ສົ່ງຟອມນີ້ໃຫ້ແກ່ OAH. **ຢ່າສົ່ງຟອມນີ້ໄປທີ່ ກະຊວງປະຊາສົງເຄາະແລະສາທາລະນະສຸກ (Department of Social and Health Services, DSHS).**
- ກະຣຸນາສົ່ງສຳເນົາຂອງຈົດໝາຍແຈ້ງຄຳຕັດສິນຂັ້ນຕົ້ນທີ່ມີພະຍານຫຼັກຖານຢັ້ງຢືນພ້ອມກັບຟອມນີ້ໃຫ້ແກ່ OAH.
- ກະຣຸນາເກັບສຳເນົາຂອງຟອມນີ້ໄວ້ເປັນບັນທຶກຂອງທ່ານເອງ.

<u>ວິທີການສົ່ງຟອມນີ້ ຫຼື ໜັງສືຄຳຮ້ອງຂໍໃຫ້ມີການພິຈາລະນາຄະດີ:</u>

- ທ່ານສາມາດສົ່ງອີເມວ ຫຼື ແຟກຊ໌ຄຳຮ້ອງຂໍໃຫ້ມີການພິຈາລະນາຄະດີໄປທີ່ OAH.
- ຖ້າວ່າ ທ່ານສົ່ງແຟກຊ໌ຄຳຮ້ອງ, ທ່ານຕ້ອງສົ່ງສຳເນົາຂອງຄຳຮ້ອງໄປທາງໄປສະນີໃນມື້ດຽວກັນນັ້ນ.